Declaration on Fundamental Principles and Rights at Work

WORK IN FREEDOM

International Labour Office

# ເສລີພາບໃນການສະມາຄົມ ແລະ ສິດທິໃນການຕໍ່ລອງຮ່ວມໃນອາຊີ

**ພາບລວມ**

ເສລີພາບໃນການສະມາຄົມ ແລະ ສິດທິໃນການຕໍ່ລອງຮ່ວມ ເປັນສິດທິມະນຸດຊົນ ຂັ້ນພື້ນຖານໃນການເຮັດວຽກຊຶ່ງເປັນສ່ວນສໍາຄັນຂອງການປົກຄອງລະບອບປະຊາທິປະໄຕ. ສິດທິເຫຼົ່ານີ້ສະໜັບ ສະໜູນເສລີພາບຂອງ ພົນລະເມືອງ ແລະ ເປັນເຄື່ອງມືປ້ອງກັນການເລືອກປະຕິບັດ, ການແຊກແຊງ ແລະ ການຄຸກຄາມ ອີກທັງຍັງ ມີບົດບາດສໍາຄັນຕໍ່ການພັດທະນາເສດຖະກິດ ແລະ ສັງຄົມຢ່າງຍັ້ງຍືນໃນພູມິພາກອາຊີ ແລະ ປາຊີຟິກ ນໍາອີກ. ໃນພູມິພາກທີ່ມີປະຊາກອນໜາແໜ້ນ ແລະ ມີຄວາມຫຼາກຫຼາຍທີ່ສຸດຂອງໂລກແຫ່ງນີ້. ສິດທິດັ່ງກ່າວ ຊ່ວຍເຊື່ອມໂຍງເປົ້າໝາຍທາງສັງຄົມເຂົ້າກັບ ຄວາມຕ້ອງການຂອງເສດຖະກິດຍຸກໂລກາພິວັດຊ່ວຍສົ່ງເສີມຄວາມ ສາມາດຂອງການຜະລິດ ມາດຕະການໃນການແກ້ໄຂຕ່າງໆ ແລະ ການດໍາເນີນອຸດສະຫະກໍາຢ່າງລາບລື່ນ ແລະ ຮັບປະກັນວ່າຜົນປະໂຫຍດຈາກການ ເຕີບໂຕທາງ ເສດຖະກິດຈະໄດ້ຮັບການແບ່ງປັນຢ່າງຍຸດຕິທໍາ.

ຕາມປະຕິນຍານອົງການແຮງງານລະຫວ່າງປະເທດວ່າດ້ວຍຫຼັກການ ແລະ ສິດທິຂັ້ນພື້ນຖານໃນການເຮັດວຽກທີ່ໄດ້ປະກາດໃຊ້ໃນການປະຊຸມແຮງງານລະຫວ່າງປະເທດເມື່ອປີ ຄ.ສ 1998, ປະເທດສະມາຊິກອົງການ ແຮງງານລະຫວ່າງປະເທດທຸກປະເທດ “ ເຖິງແມ່ນວ່າຈະຍັງບໍ່ໄດ້ຮັບຮອງອະນຸສັນຍາບາງສະບັບກໍ່ຖືວ່າມີພັນ ທະທີ່ເກີດຈາກສະມາຊິກພາບ ທີ່ຈະຕ້ອງເຄົາລົບສົ່ງເສີມ ແລະ ບັງຄັບໃຊ້ຫຼັກການຕ່າງໆ ທີ່ກ່ຽວກັບສິດທິຂັ້ນພື້ນ ຖານຕ່າງໆທີ່ໄດ້ລະບຸໄວ້ໃນອະນຸສັນຍາເຫຼົ່ານັ້ນດ້ວຍຄວາມຈິງໃຈຕາມຫຼັກການຂອງທໍາມະນູນອົງການແຮງງານລະຫວ່າງປະເທດ ” ພັນທະນີ້ລວມເຖິງການປະກັນເສລີພາບໃນການສະມາຄົມ ແລະ ຍອມຮັບສິດທິໃນການ ຕໍ່ລອງຮ່ວມຢ່າງຈິງຈັງດ້ວຍ.

**ຂໍ້ເທັດຈິງທີ່ສຳຄັນ.**

- ໃນທະວີບອາຊີມີການຮອງຮັບອະນຸສັນຍາຫຼັກຂອງອົງການແຮງງານລະຫວ່າງປະເທດ 8 ສະບັບຫຼາຍຂຶ້ນຊຶ່ງຮ່ວມເຖິງອະນຸສັນຍາອັນກ່ຽວກັບເສລີພາບໃນການສະມາຄົມ ແລະ ການຕໍ່ລອງຮ່ວມ ປະເທດສະມາຊິກອົງການແຮງງານລະຫວ່າງປະເທດ. ໃນພູມິພາກອາຊີ ແລະ ປາຊີຟິກປະມານ 46% ໄດ້ຮັບຮອງ ອະນຸສັນຍາອົງການ ແຮງງານລະຫວ່າງປະເທດວ່າດ້ວຍເສລີພາບໃນການສະມາຄົມ ແລະ ການປະກັນ ສິດໃນການເຄື່ອນໄຫວ ຄ.ສ .1948 ( ສະບັບທີ່ 87 ) ແລະ ປະເທດສະມາຊິກ 64% ໄດ້ຮັບຮອງອະ ນຸ ສັນຍາວ່າດ້ວຍສິດທິໃນການເຄື່ອນໄຫວ ແລະ ຕໍ່ລອງຮ່ວມ ຄ.ສ. 1949 ( ສະບັບທີ່ 98 ).

- ແຕ່ລູກຈ້າງບາງກຸ່ມຍັງບໍ່ໄດ້ຮັບເສລີພາບໃນການສະມາຄົມ ແລະ ການຕໍ່ລອງຮ່ວມຫນີ້. ລູກຈ້າງໃນພາກ ລັດຢູ່ໃນກຸ່ມຄົນທີ່ມັກມີຂໍ້ຈຳກັດໃນດ້ານສິດທິໃນການເຄື່ອນໄຫວ ແລະ ຕໍ່ລອງຮ່ວມຫຼາຍທີ່ສຸດ. ໃນປະຈຸບັນແນວໂນ້ມທາງເສດຖະກິດ ແລະ ການແປຮູບ ກິດຈະການ ເປັນແບບເອກະຊົນຈຳກັດເສລີພາບດັ່ງກ່າວ ແລະ ເຮັດໃຫ້ເກີດ ແນວ ໂນ້ມທີ່ຈະເກີດການປະເຊີນໜ້າກັນໄດ້ງ່າຍ. ລູກຈ້າງໃນພາກກະສິກຳປະ ສົບບັນຫາ ຕ່າງໆ ຫຼາຍປະການບໍ່ວ່າຈະເປັນການບໍ່ໄດ້ຮັບຄວາມຄຸ້ມຄອງຕາມກົດໝາຍ ຫຼືການໃຊ້ ຄວາມຮຸນແຮງ ແລະ ການຄຸກຄາມຕ່າງໆ ຕໍ່ຜູ້ທີ່ພະຍາຍາມ ເຄື່ອນໄຫວ ສຳລັບພື້ນທີ່ສ່ວນໃຫຍ່ໃນພູມິ. ພາກອາຊີນັ້ນກະສິກຳເປັນແຫຼ່ງງານທີ່ໃຫຍ່ທີ່ສຸດ. ສະພາບການ ເຮັດວຽກທີ່ຍາກລຳບາກການໃຊ້ຄວາມຮຸນແຮງ ແລະ ການຄຸກຄາມ ເປັນບັນຫາ ທີ່ເກີດຂຶ້ນໂດຍທົ່ວໄປ, ສຳລັບພາກການຄ້າການສົ່ງອອກຍັງຄົງມີລາຍ ງານກ່ຽວກັບ ບັນຫາໃນການເຄື່ອນໄຫວ ເຖິງວ່າປະເທດສ່ວນໃຫຍ່ຈະບັງຄັບໃຊ້ກົດໝາຍດ້ານແຮງງານສຳພັນໃນພາກອຸດສະຫະກຳການສົ່ງອອກແລ້ວກໍ່ຕາມ. ພາກການສົ່ງອອກ ນີ້ເຕີບໂຕ ຂຶ້ນຢ່າງໄວວາ. ໃນ ຄ.ສ 1975 ມີພື້ນທີ່ອຸດສະຫະກຳເພື່ອການສົ່ງອອກ 79 ແຫ່ງໃນ 25 ປະເທດທົ່ວໂລກ, ແຕ່ໃນ ຄ.ສ 2002 ມີພື້ນທີ່ດັ່ງກ່າວ 3,000 ແຫ່ງໃນ 116 ປະເທດ ແລະ ມີຄົນງານຢ່າງນ້ອຍ 43 ລ້ານຄົນ. ຄົນງານ ຕ່າງດ້າວມັກບໍ່ມີສິດ ໃນການເຄື່ອນ ໄຫວບໍ່ວ່າຈະເປັນໃນທາງກົດໝາຍຫຼືໃນທາງປະຕິບັດ ແລະ ຜູ້ທີ່ເຮັດ ວຽກໂດຍບໍ່ມີ ໃບອະນຸຍາດຈະເສຍປຽບຫຼາຍ. ໃນທະວີບອາຊີຄົນງານ ຕ່າງດ້າວເຄິ່ງໜຶ່ງຫຼືສ່ວນໃຫຍ່ເປັນ ຜູ້ຍິງ. ປະຊາຊົນກ່ວາ 80 ລ້ານຄົນທົ່ວໂລກມີບົດບາດທາງເສດຖະກິດ

ນອກປະເທດ ຂອງຕົນ. ຄົນຮັບໃຊ້ ໃນບ້ານມັກຖືກເອົາປຽບ ແລະ ບໍ່ມີສິດທິຂັ້ນພື້ນຖານ ໃນການເຮັດ ວຽກເຖິງວ່າຄົນເຫຼົ່ານີ້ຈະມີບົດບາດ ທາງເສດຖະກິດ ແລະ ສັງຄົມຫຼາຍ ຂຶ້ນໃນ ຕະຫຼາດ ແຮງງານທົ່ວໂລກກໍ່ຕາມ, ໃນພາກເສດຖະກິດນອກລະບົບນັ້ນມີການຈ້າງງານແຝງ ທີ່ມີຄວາມຄຸມເຄືອຢູ່ຫຼາຍເຮັດໃຫ້ເກີດຄວາມສັບສົນໃນເລື່ອງຂອບເຂດ ແລະ ຄວາມຄຸ້ມຄອງຂອງກົດໝາຍແຮງງານຊຶ່ງລວມເຖິງສິດທິໃນການເຄື່ອນໄຫວ ແລະ ການຕໍ່ລອງຮ່ວມໃນທະວີບອາຊີການຈ້າງງານໃນພາກເສດຖະກິດນອກລະບົບມີອັດຕາສ່ວນ 65% ຂອງການຈ້າງ ງານນອກພາກກະສິກຳທັງໝົດ.

**ກ້າວຕໍ່ໄປ**

- ອົງການນາຍຈ້າງທົ່ວພູມິພາກອາຊີແລະແປຊີຟິກຮ່ວມງານກັບອົງການແຮງງານລະຫວ່າງປະເທດເພື່ອເພີ່ມບົດບາດຂອງຜູ້ຍິງໂດຍໃຫ້ຜູ້ປະກອບການຜູ້ຍິງມີໂອກາດໃນການສະແດງຄວາມຄິດເຫັນ. ຜູ້ປະກອບການຍິງ ຍັງມີຕົວແທນໃນອົງການ ນາຍຈ້າງທົ່ວໂລກນ້ອຍເກີນໄປໃນການດຳເນີນງານໃນພູມິພາກອາຊີແລະແປຊີຟິກມີການສຳຫຼວດຄວາມຕ້ອງການ ຂອງຜູ້ປະກອບການຍິງແລະວາງແຜນຊ່ວຍເຫຼືອຄົນ ເຫຼົ່ານີ້ລວມຢູ່ນຳ.
- ທີ່ຮົງກົງປະເທດຈີນແມ່ບ້ານທີ່ເປັນຄົນງານຕ່າງດ້າວ 240,000 ຄົນເປັນສະມາຊິກສະຫະພາບ ແຮງງານປະມານ 20 ແຫ່ງຊຶ່ງໄດ້ຮັບການສະໜັບສະໜູນ ຈາກສະຫະພາບແຮງງານແຫ່ງຮົງກົງ (Hong Kong Congress of Trade Unions).
- ທີ່ກາລາຈີ ປະເທດປາກີສະຖານ ກຸ່ມຄົນຂັບແທກຊີ່, ລົດບັນທຸກ ແລະ ລົດໂດຍສານສາມາດກໍ່ຕັ້ງ ສະຫະພາບແຮງງານການຂົນສົ່ງ ພາກເອກະຊົນ ໄດ້ສຳເລັດໂດຍໄດ້ຈົດທະບຽນສະຫະພາບກັບສຳນັກງານແຮງງານປະຈຳເມືອງ ເຖິງວ່າ ກົດໝາຍຂອງປະເທດຈະລະບຸໃຫ້ຕັ້ງສະຫະພາບຕາມບໍລິສັດ ແຕ່ສະຫະພາບ ຂອງຄົນ ຂັບລົດເຫຼົ່ານີ້ກັບຕັ້ງຂຶ້ນຕາມເສັ້ນທາງການຂັບລົດ.
- ທີ່ຕິມໍຕາເວັນອອກ ຫຼັກການຂັ້ນພື້ນຖານ ຕ່າງໆຂອງອົງການແຮງງານ ລະຫວ່າງປະເທດລວມເຖິງ ເສລີພາບໃນການສະມາຄົມ ແລະ ສິດທິໃນການຕໍ່ລອງຮ່ວມ

ໄດ້ຮັບການບັນຍັດໄວ້ໃນລັດຖະທຳ ມະນູນສະບັບໃໝ່ຂອງປະເທດ ແລະ ອົງການແຮງງານລະຫວ່າງປະເທດໄດ້ຊ່ວຍຮ່າງກົດໝາຍ ແຮງງານສະບັບໃໝ່ດ້ວຍ.

- ທີ່ອິນໂດເນເຊຍ, ອົງການແຮງງານລະຫວ່າງປະເທດ ດຳເນີນໂຄງການ ສ້າງຄວາມໄວ້ວາງໃຈ ແລະ ປະສິດທິພາບດ້ານແຮງງານສຳພັນ ເພື່ອສົ່ງເສີມເສລີພາບໃນການສະມາຄົມແລະການຕໍ່ລອງຮ່ວມ ອົງການ ໄດ້ອົບຮົມປະຊາຊົນ ຜູ້ມີສິດທິເລືອກຕັ້ງ 6,000 ຄົນໃນ 7 ແຂວງ ເຊິ່ງຮ່ວມເຖິງເຈົ້າໜ້າທີ່ ຜູ້ກວກກາ ແລະ ຜູ້ໄກ່ເກຍດ້ານແຮງງານຈຳນວນ 2,000 ຄົນ ແລະ ຕົວແທນສະຫະພາບແຮງງານ ແລະ ອົງກອນນາຍຈ້າງໃນຈຳນວນເທົ່າໆກັນ.
- ທີ່ຫວຽດນາມ ໂຄງການສົ່ງເສີມເສລີພາບໃນການສະມາຄົມ ແລະ ສິດທິໃນການຕໍ່ລອງຮ່ວມຂອງ ອົງການແຮງງານລະຫວ່າງປະເທດ ມີສ່ວນສຳຄັນ ໃນການກໍ່ສ້າງສູນບໍລິການດ້ານແຮງງານສຳພັນໃນ 7 ແຂວງ.

## ບົດບາດຂອງອົງການແຮງງານລະຫວ່າງປະເທດ

ປະຕິນຍາອົງການແຮງງານລະຫວ່າງປະເທດທີ່ໄດ້ປະກາດໃຊ້ໃນ ຄ.ສ 1998 ບັງຄັບໃຫ້ອົງການ ຕ້ອງສະໜັບສະໜູນຄວາມພະຍາຍາມຂອງປະເທດ ສະມາຊິກ ທີ່ຈະປະກັນຫຼັກການ ແລະ ສິດທິຂັ້ນພື້ນຖານຕ່າງໆ ໃນການເຮັດວຽກຊຶ່ງລວມ ເຖິງເສລີພາບໃນການສະມາຄົມແລະການຕໍ່ລອງຮ່ວມດ້ວຍ. ປະຕິນຍາ ສະບັບນີ້ເຮັດໃຫ້ເກີດ ແຜນເຄົ້າໂຄງຄວາມຊ່ວຍເຫຼືອທາງດ້ານເທັກນິກສະບັບໃໝ່ທີ່ໄດ້ຜົນແຜນນີ້ມີແນວຄວາມຄິດຕ່າງໆຕັ້ງແຕ່ຄຳແນະນຳໃນການແກ້ໄຂກົດໝາຍໄປຈົນເຖິງໂຄງການໄລຍະຍາວຕ່າງໆ ທີ່ຫຼາກຫຼາຍ. ໃນປີ ຄ.ສ 2000. ແຜນປະຕິບັດການສະບັບທຳອິດທີ່ໄດ້ຈັດທຳ ຂຶ້ນເປັນສ່ວນໜຶ່ງຂອງ ການຕິດຕາມຜົນຂອງປະຕິນຍາສະບັບດັ່ງກ່າວ ໄດ້ລວບລວມ ລາຍຊື່ປະເທດທີ່ຕ້ອງການຄວາມຊ່ວຍເຫຼືອທາງເທັກນິກກ່ວາ 50 ປະເທດ. ຕັ້ງແຕ່ນັ້ນ ມາຫຼາຍປະເທດທີ່ຂໍຄວາມຊ່ວຍເຫຼືອໄດ້ດຳເນີນໂຄງການ ແລະກິດຈະກຳຕ່າງໆ ຮ່ວມກັບອົງການແຮງງານລະຫວ່າງປະເທດໂດຍມີຜູ້ບໍລິຈາກເງິນສະໜັບສະໜູນ ການດຳເນີນງານໃນທະວີບອາຊີການດຳເນີນງານດ້ານນີ້ຈະເນັ້ນເລື່ອງເສລີພາບໃນການສະມາຄົມ ແລະການຕໍ່ລອງຮ່ວມ ໂດຍຫມຸ້ງພັດທະນາ ສັກກະຍາພາບ ຂອງອົງການຕ່າງໆ ໃນ

ພາກລັດລວມທັງອົງ ກອນນາຍຈ້າງແລະລູກຈ້າງ ຊຶ່ງຈະສົ່ງເສີມການພົວພັນອັນດີ ໃນໝູ່ອົງກອນຕ່າງໆທັງສາມພາກນີ້.ໂຄງການຕ່າງໆດັ່ງກ່າວກຳລັງດຳເນີນງານຢູ່ໃນຫຼາຍປະເທດລວມທັງບັງກະລາເທດ, ກຳປູເຈຍ, ຕີມໍ ຕາເວັນອອກ, ອິນໂດເນເຊຍ ແລະ ຫວຽດນາມ..